
EY
Building a better
working world

ບໍລິສັດ ຊິມັ້ງລາວ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

ບໍລິສັດ ຊິມັ້ງລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານຂອງຄະນະບໍລິຫານ	4
ບົດລາຍງານຂອງນັກກວດສອບອິດສະຫຼະ	5 - 7
ໃບລາຍງານຖານະການເງິນ	8 - 9
ໃບລາຍງານຜົນການດຳເນີນງານ	10
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	11
ໃບລາຍງານກະແສເງິນສົດ	12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	13 - 28

ບໍລິສັດ ຊິມັ່ງລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ຊິມັ່ງລາວ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ຊິມັ່ງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດ ທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI) ("ຝ່າຍ ກ") ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ (CYC) ("ຝ່າຍ ຂ").

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກ ອອກໂດຍ ກະຊວງອຸດສະຫະກຳ ແລະ ການຄ້າ, ເຊິ່ງ ບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊິມັ່ງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊິມັ່ງ ເພື່ອການຈຳໜ່າຍພາຍໃນ ແລະ ສົ່ງອອກ.

ບໍລິສັດໄດ້ມີການປັບປຸງໃບທະບຽນວິສາຫະກິດດັ່ງລຸ່ມນີ້:

ໃບທະບຽນວິສາຫະກິດ	*ວັນທີ*
0078/ຈທກ	5 ເມສາ 2006
1719/ຈທກ	26 ກຸມພາ 2009
0244/ຈທກ	20 ກຸມພາ 2012
1436/ຈທກ	15 ພະຈິກ 2012
791/ຈທກ	13 ພະຈິກ 2015
1016/ຈທກ	5 ທັນວາ 2016
0247/ຈທກ	24 ມີນາ 2017
0688/ຈທກ	2 ສິງຫາ 2017
0160/ຈທກ	20 ກຸມພາ 2018

ພາຍໃນປີ, ກິດຈະກຳຫຼັກຂອງບໍລິສັດແມ່ນມີດັ່ງນີ້:

- ▶ ຜະລິດຊິມັ່ງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັ່ງ;
- ▶ ຂາຍສົ່ງ ແລະ ຂາຍຍ່ອຍຊິມັ່ງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັ່ງສຳລັບການບໍລິໂພກພາຍໃນ ແລະ ສົ່ງອອກ.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ຖະໜົນໜອງບອນ, ບ້ານໜອງບອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊິມັ່ງວັ້ງວຽງ ຫຼັງ 2 ຢູ່ເມືອງວັ້ງວຽງ, ແຂວງ ວຽງຈັນ, ສປປ ລາວ.

ບໍລິສັດ ຊິມັ້ງລາວ ມະຫາຊົນ

ຂໍ້ມູນທົ່ວໄປ (ຕໍ່)

ສະພາອຳນວຍການ

ສະມາຊິກສະພາອຳນວຍການ ພາຍໃນປີ ແລະ ນະວັນທີອອກເອກະສານລາຍງານການເງິນສະບັບນີ້ລວມມີ:

ທ່ານ ຫຼີ ເຫວີຍ	ປະທານ	
ທ່ານ ບຸນແປງ ບົວພັນ	ຮອງປະທານ	
ທ່ານ ຈ່າງ ລີ້	ສະມາຊິກ	
ທ່ານ ຈ່າວ ຊື	ສະມາຊິກ	ລາອອກວັນທີ 25 ເມສາ 2018
ທ່ານ ລີ ມິງ	ສະມາຊິກ	ແຕ່ງຕັ້ງວັນທີ 25 ເມສາ 2018
ທ່ານ ເຈຍ ເຢົາຊີ	ສະມາຊິກ	
ທ່ານ ຄຳບິນ ໄຊເລົ່າວົງ	ສະມາຊິກ	
ທ່ານ ທອງປົນ ກິ່ງຄຳເພັດ	ສະມາຊິກ	
ທ່ານ ສ່ຽວ ເຈຍ	ສະມາຊິກອິດສະຫຼະ	
ທ່ານ ຫຼີ ຊຸນ ໂປ	ສະມາຊິກອິດສະຫຼະ	
ທ່ານ ວົງວິຈິດ ແກ້ວວົງກົດ	ສະມາຊິກອິດສະຫຼະ	

ຄະນະບໍລິຫານ

ສະມາຊິກຄະນະບໍລິຫານຂອງບໍລິສັດ ພາຍໃນປີ ແລະ ນະວັນທີອອກເອກະສານລາຍງານສະບັບນີ້ລວມມີ:

ທ່ານ ຈ່າງ ລີ້	ຜູ້ອຳນວຍການໃຫຍ່	
ທ່ານ ຫຼີ ເຫວີຍ	ຜູ້ອຳນວຍການ	
ທ່ານ ບຸນແປງ ບົວພັນ	ຜູ້ອຳນວຍການ	
ທ່ານ ຈ່າວ ຊື	ຜູ້ອຳນວຍການ	ລາອອກວັນທີ 25 ເມສາ 2018
ທ່ານ ລີ ມິງ	ຜູ້ອຳນວຍການ	ແຕ່ງຕັ້ງວັນທີ 25 ເມສາ 2018
ທ່ານ ເຈຍ ເຢົາຊີ	ຜູ້ອຳນວຍການ	
ທ່ານ ຄຳບິນ ໄຊເລົ່າວົງ	ຜູ້ອຳນວຍການ	
ທ່ານ ທອງປົນ ກິ່ງຄຳເພັດ	ຜູ້ອຳນວຍການ	
ທ່ານ ສ່ຽວ ເຈຍ	ຜູ້ອຳນວຍການ	
ທ່ານ ຫຼີ ຊຸນ ໂປ	ຜູ້ອຳນວຍການ	
ທ່ານ ວົງວິຈິດ ແກ້ວວົງກົດ	ຜູ້ອຳນວຍການ	

ບໍລິສັດ ຊິມັ້ງລາວ ມະຫາຊົນ

ຂໍ້ມູນທົ່ວໄປ (ຕໍ່)

ຄະນະກຳມະການກວດສອບ

ສະມາຊິກຄະນະກຳມະການກວດສອບຂອງບໍລິສັດ ພາຍໃນປີ ແລະ ນະວັນທີອອກເອກະສານລາຍງານສະບັບນີ້ລວມມີ:

ທ່ານ ສ່ຽວ ເຈຍ	ປະທານ
ທ່ານ ຫຼີ ຊຸນ ໂປ	ສະມາຊິກ
ທ່ານ ວິງວິຈິດ ແກ້ວວິງກິດ	ສະມາຊິກ

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອິນ ແອນ ຢັ້ງ ລາວ ຈຳກັດ.

ບໍລິສັດ ຊີມັງລາວ ມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານບໍລິສັດ ຊີມັງລາວ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ພ້ອມທັງເອກະສານລາຍງານການເງິນຂອງບໍລິສັດ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ, ເຊິ່ງຈະຕ້ອງກະກຽມໂດຍອີງຕາມນະໂຍບາຍການບັນຊີຕາມທີ່ໄດ້ລະບຸໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ. ນະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງເພື່ອນຳສະເໜີຖານະການເງິນ, ຜົນຂອງການດຳເນີນທຸລະກິດ ແລະ ກະແສເງິນສົດຂອງບໍລິສັດ ໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະລາຍງານການເງິນ, ຄະນະບໍລິຫານຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສອດຄ່ອງ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ການລະເມີດທີ່ສຳຄັນຕໍ່ທີ່ຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ; ແລະ,
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານວ່າ ບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານມີຄວາມຮັບຜິດຊອບໃນການຮັບປະກັນວ່າບັນດາຂໍ້ມູນທາງການບັນຊີທີ່ຖືກບັນທຶກໄວ້ນັ້ນ ໄດ້ຮັບການເປີດເຜີຍຕາມຄວາມຖືກຕ້ອງເໝາະສົມຢູ່ຕະຫຼອດເວລາກ່ຽວກັບຖານະການເງິນຂອງບໍລິສັດ ແລະ ຮັບປະກັນວ່າ ເອກະສານລາຍງານການເງິນໄດ້ສອດຄ່ອງກັບຫຼັກການທາງດ້ານບັນຊີທີ່ເໝາະສົມ. ຄະນະບໍລິຫານຍັງມີຄວາມຮັບຜິດຊອບໃນການຮັກສາຊັບສິນຂອງບໍລິສັດ ແລະ ຕ້ອງມີຂັ້ນຕອນທີ່ເໝາະສົມໃນການປ້ອງກັນ ແລະ ຊອກຫາການສໍ້ໂກງ ແລະ ສິ່ງຜິດປົກກະຕິອື່ນໆ.

ຄະນະບໍລິຫານຢັ້ງຢືນວ່າ ໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນສະບັບນີ້.

ການອະນຸມັດເອກະສານລາຍງານການເງິນ

ພວກຂ້າພະເຈົ້າ ຕົກລົງເຫັນດີອະນຸມັດຮັບຮອງເອົາເອກະສານລາຍງານການເງິນສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018 ທີ່ຖືກກະກຽມໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ.

ໃນນາມຄະນະບໍລິຫານ:

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທ່ານ ...

ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
3 ເມສາ 2019

Ernst & Young Lao Co., Ltd
6th Floor, Kolao Tower I
23 Singha Road, Nongbone Village
Saysettha District
Vientiane Capital, Lao PDR

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61228095/ 19926923

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ : ສະພາອຳນວຍການຂອງ ບໍລິສັດ ຊີມັ້ງລາວ ມະຫາຊົນ ທີ່ນັບຖື

ຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງ ບໍລິສັດ ຊີມັ້ງລາວ ມະຫາຊົນ ("ບໍລິສັດ"), ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນ ນະວັນທີ 31 ທັນວາ 2018, ແລະ ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍເອກະສານລາຍງານການເງິນ ລວມທັງບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງບໍລິສັດໄດ້ຖືກກະກຽມໂດຍຖືກຕ້ອງຕາມຄວາມເປັນຈິງ ສອດຄ່ອງກັບນະໂຍບາຍການບັນຊີ ທີ່ລະບຸໄວ້ໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນ.

ພື້ນຖານໃນການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບ ໂດຍອີງຕາມມາດຕະຖານສາກົນວ່າດ້ວຍການກວດສອບ (ISAs). ບັນດາຄວາມຮັບຜິຊອບຂອງ ພວກຂ້າພະເຈົ້າ ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນໄດ້ຖືກອະທິບາຍເພີ່ມຕື່ມໃນຫົວ *ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ*. ພວກຂ້າພະເຈົ້າ ແມ່ນມີຄວາມເປັນເອກະລາດຈາກບໍລິສັດ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີ ສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

ບັນຫາທີ່ຄວນເອົາໃຈໃສ - ພື້ນຖານທາງການບັນຊີ ແລະ ຂໍ້ຈຳກັດໃນການເຜີຍແຜ່ ແລະ ນຳໃຊ້

ພວກຂ້າພະເຈົ້າ ສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ ທີ່ໄດ້ລະບຸກ່ຽວກັບນະໂຍບາຍການບັນຊີທີ່ຖືກນຳໃຊ້ໂດຍບໍລິສັດ. ນະໂຍບາຍການບັນຊີເຫຼົ່ານີ້ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ, ຜົນການດຳເນີນງານ ແລະ ກະແສເງິນ ສົດ ຂອງບໍລິສັດ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ດັ່ງທີ່ໄດ້ເປີດເຜີຍຢູ່ໃນບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນສະບັບນີ້, ເອກະສານລາຍງານການເງິນແມ່ນຖືກກະກຽມເພື່ອຊ່ວຍໃຫ້ບໍລິສັດບັນລຸເປົ້າໝາຍໃນການລາຍງານ ຕາມຄວາມຮຽກຮ້ອງຕ້ອງການຂອງເຈົ້າຂອງບໍລິສັດ. ດັ່ງນັ້ນ, ເອກະສານລາຍງານການເງິນ ອາດບໍ່ເໝາະສົມກັບຈຸດປະສົງອື່ນ. ບົດລາຍງານ ຂອງພວກຂ້າພະເຈົ້າ ມີໄວ້ເພື່ອການບໍລິຫານຂອງບໍລິສັດ ແລະ ເຈົ້າຂອງບໍລິສັດ ແລະ ບໍ່ຄວນແຈກຢາຍ ຫຼື ນຳໃຊ້ໂດຍພາກສ່ວນອື່ນນອກ ຈາກບໍລິສັດ ຫຼື ເຈົ້າຂອງບໍລິສັດ. ພວກຂ້າພະເຈົ້າບໍ່ມີຄຳເຫັນຕໍ່ກັບບັນຫາດັ່ງກ່າວ.

Building a better working world

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ

ຄະນະບໍລິຫານຂອງບໍລິສັດແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບນະໂຍບາຍດ້ານການການບັນຊີ ຕາມທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ ລວມທັງການຄຸ້ມຄອງພາຍໃນທີ່ຄະນະບໍລິຫານພິຈາລະນາວ່າ ມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນ ໂດຍປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງບໍລິສັດທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ການເປີດເຜີຍຕາມຄວາມເໝາະສົມ, ບັນຫາທີ່ກ່ຽວຂ້ອງກັບຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ເວັ້ນເສຍແຕ່ ຄະນະບໍລິຫານບໍລິສັດ ມີເຈດຕະນາຍົກເລີກກິດຈະການຂອງບໍລິສັດ ຫຼື ຢຸດກິດຈະການ.

ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນການຮັບປະກັນຢ່າງສົມເຫດສົມຜົນວ່າ ເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ, ແລະ ອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ, ແຕ່ບໍ່ໄດ້ຮັບປະ ກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານການກວດສອບສາກົນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດອັນໃຫຍ່ຫຼວງ ທີ່ອາດເກີດຂຶ້ນຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາ ລະນາຕາມສຳຄັນຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ, ຂໍ້ຜິດພາດເຫຼົ່ານັ້ນ ອາດມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ່ທີ່ນຳໃຊ້ເອກະສານລາຍງານການເງິນສະບັບນີ້.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນຢ່າງມືອາຊີບ ແລະ ນຳໃຊ້ການວິນິດໄສແບບມືອາຊີບ ໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫລວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ໄດ້ເກັບກຳຫຼັກຖານການກວດສອບຢ່າງພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງທີ່ອາດຈະບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ, ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງນັບດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.

Building a better working world

- ສະຫຼຸບກ່ຽວກັບຄວາມເໝາະສົມ ໃນການນຳໃຊ້ຫຼັກການແຫ່ງຄວາມສົມເນື່ອງໃນການດຳເນີນທຸລະກິດພື້ນຖານການບັນຊີຂອງຄະນະບໍລິຫານ, ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ, ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກ ບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໄສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງບໍລິສັດໃນສົມເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າ ສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອະນາຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ບໍລິ ສັດຢຸດຕິການສືບຕໍ່ຄວາມສົມເນື່ອງໃນການດຳເນີນທຸລະກິດ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານຂອງບໍລິສັດກ່ຽວກັບບັນຫາເຫຼົ່ານັ້ນ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ພົບເຫັນທາງການກວດສອບທີ່ສຳຄັນ ປະກອບມີບັນດາຂໍ້ບົກຜ່ອງທີ່ສຳຄັນຕ່າງໆ ໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ພົບໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

Ernst & Young Lao Co.,Ltd

ERNST & YOUNG LAO CO.,LTD

ບໍລິສັດ ເອີນ ແອນ ຢັ້ງ ລາວ ຈຳກັດ

ນະຄອນຫຼວງວຽງຈັນ, ສປປ ລາວ

3 ເມສາ 2018

ບໍລິສັດ ຊິມັ່ງລາວ ມະຫາຊົນ

ໃບລາຍງານຖານະທາງການເງິນ
ນະວັນທີ 31 ທັນວາ 2018

	ບິດອະທິບາຍ ເລກທີ	31 ທັນວາ 2018 ກີບ	31 ທັນວາ 2017 ກີບ
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນບັດຄົງທີ່ມີຕົວຕົນ	4	28,326,971,138	35,542,584,664
ຊັບສິນພວມກໍ່ສ້າງ	5	6,862,989,484	4,417,773,226
ຊັບສິນບັດຄົງທີ່ບໍ່ມີຕົວຕົນ		328,548,475	328,548,475
ຊັບສິນບໍ່ໝຸນວຽນອື່ນໆ	6	368,200,000	431,320,000
ລວມຍອດຊັບສິນບໍ່ໝຸນວຽນ		**35,886,709,097**	**40,720,226,365**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ		1,040,538,316	145,135,500
ເຄື່ອງໃນສາງ	7	40,487,833,371	30,841,850,999
ໜີ້ຕ້ອງຮັບອື່ນໆ		784,102,807	19,997
ເງິນລ່ວງໜ້າໃຫ້ແກ່ຜູ້ສະໜອງ		32,639,750	1,366,553,654
ໜີ້ຕ້ອງຮັບການຄ້າ	8	38,296,802,133	42,081,522,477
ການລົງທຶນໄລຍະສັ້ນ	9	12,000,000,000	-
ເງິນສົດ	10	6,249,412,532	11,479,523,628
ລວມຍອດຊັບສິນໝຸນວຽນ		**98,891,328,909**	**85,914,606,255**
ລວມຍອດຊັບສິນທັ້ງໝົດ		**134,778,038,006**	**126,634,832,620**

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານຖານະທາງການເງິນ (ຕໍ່)
ນະວັນທີ 31 ທັນວາ 2018

	ບົດອະທິບາຍ ເລກທີ	*31 ທັນວາ 2018 ກີບ*	*31 ທັນວາ 2017 ກີບ*
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ		11,228,343,680	10,294,385,490
ເງິນລ່ວງໜ້າຈາກລູກຄ້າ		152,773,000	154,773,000
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ	23	7,316,302,084	3,191,212,598
ເງິນກູ້ຢືມ		-	12,107,150,240
ພັນທະອາກອນ	11	7,916,000,726	7,184,154,148
ໜີ້ຕ້ອງສົ່ງໃຫ້ພະນັກງານ		-	676,478,313
ຄັງສຳຮອງສະຫວັດດີການ	12	1,878,498,865	5,380,508,915
ໜີ້ຕ້ອງສົ່ງອື່ນໆ	13	13,746,210,887	15,312,348,770
ລວມຍອດໜີ້ສິນໝຸນວຽນ		**42,238,129,242**	**54,301,011,474**
ລວມຍອດໜີ້ສິນທັງໝົດ		**42,238,129,242**	**54,301,011,474**
ທຶນ			
ທຶນຈົດທະບຽນຕາມກົດໝາຍທີ່ຖອກແລ້ວ	14	20,002,000,000	14,001,400,000
ສ່ວນເກີນມູນຄ່າຮຸ້ນ		18,385,975,511	16,660,000
ຄັງສຳຮອງຕາມລະບຽບການ		7,661,007,370	6,800,594,894
ຄັງສຳຮອງເພື່ອຂະຫຍາຍກິດຈະການ		18,484,897,832	17,194,279,118
ກຳໄລສະສົມ		28,006,028,051	34,320,887,134
ລວມຍອດທຶນ		**92,539,908,764**	**72,333,821,146**
ລວມຍອດໜີ້ສິນ ແລະ ທຶນທັງໝົດ		**134,778,038,006**	**126,634,832,620**

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທ່ານ ຈ່າງ ລີ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຢົງຟູ
ຜູ້ຈັດການຝ່າຍການບັນຊີ - ການເງິນ

3 ເມສາ 2019

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

	ບົດອະທິບາຍ ເລກທີ	2018 ກີບ	2017 ກີບ
ລາຍຮັບຈາກການຂາຍສິນຄ້າ	15	97,411,605,646	130,516,304,369
ຕົ້ນທຶນຈາກການຂາຍ	16	(86,950,106,443)	(106,017,162,625)
ກຳໄລລວມ		**10,461,499,203**	**24,499,141,744**
ລາຍໄດ້ຈາກການດຳເນີນງານອື່ນໆ	17	585,411,222	96,035,087
ເກັບຄືນເງິນແຮໜີ້ທວງຍາກ		660,246,038	(1,021,948,000)
ຕົ້ນທຶນຈາກການຂາຍ ແລະ ຈຳໜ່າຍ	18	(2,497,527,176)	(3,192,546,236)
ລາຍຈ່າຍໃນການດຳເນີນງານ	19	(8,733,566,377)	(8,531,644,633)
ກຳໄລຈາກການດຳເນີນງານ		**476,062,910**	**11,849,037,962**
ລາຍຮັບທາງການເງິນ	20	989,778,683	698,624,921
ລາຍຈ່າຍທາງການເງິນ	21	(898,296,928)	(2,047,993,928)
ກຳໄລກ່ອນອາກອນ		**567,544,665**	**10,499,668,955**
ອາກອນກຳໄລ	**22**	**(137,092,911)**	**(1,895,544,191)**
ກຳໄລສຸດທິຫຼັງອາກອນພາຍໃນປີ		**430,451,754**	**8,604,124,764**

ບໍລິສັດ ຊີມັງລາວ ມະຫາຊົນ
Lao Cement Public Company

ທ່ານ ວິໄຈ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຢົງຟູ
ຜູ້ຈັດການຝ່າຍການບັນຊີ - ການເງິນ

3 ເມສາ 2019

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ *ກີບ*	*ສ່ວນເກີນມູນຄ່າຮຸ້ນ* *ກີບ*	*ຄັງສຳຮອງຕາມລະບຽບການ* *ກີບ*	*ຄັງສຳຮອງເພື່ອຂະຫຍາຍກິດຈະການ* *ກີບ*	*ກຳໄລສະສົມ* *ກີບ*	*ລວມທັງໝົດ* *ກີບ*
ຍອດເຫຼືອນະວັນທີ 1 ມັງກອນ 2017	3,631,150,081	-	6,220,227,892	16,323,728,614	33,420,432,396	59,595,538,983
ອອກຮຸ້ນໃໝ່	10,370,249,919	16,660,000	-	-	-	10,386,909,919
ກຳໄລສຸດທິພາຍໃນປີ	-	-	-	-	8,604,124,764	8,604,124,764
ໂອນເປັນຄັງສຳຮອງຕາມລະບຽບການ	-	-	580,367,002	-	(580,367,002)	-
ໂອນເປັນຄັງສຳຮອງອື່ນໆ	-	-	-	870,550,504	(870,550,504)	-
ອາກອນເພີ່ມເຕີມສຳລັບປີຜ່ານມາຕາມການໄລ່ລຽງຂອງ ເຈົ້າໜ້າທີ່ສອຍສາອາກອນ	-	-	-	-	(1,900,000,000)	(1,900,000,000)
ໂອນເປັນຄັງສຳຮອງສະຫວັດດີການ	-	-	-	-	(580,367,002)	(580,367,002)
ຈ່າຍເງິນປັນຜົນ	-	-	-	-	(3,772,385,518)	(3,772,385,518)
ຍອດເຫຼືອນະວັນທີ 31 ທັນວາ 2017	**14,001,400,000**	**16,660,000**	**6,800,594,894**	**17,194,279,118**	**34,320,887,134**	**72,333,821,146**
ຍອດເຫຼືອນະວັນທີ 1 ມັງກອນ 2018	14,001,400,000	16,660,000	6,800,594,894	17,194,279,118	34,320,887,134	72,333,821,146
ອອກຮຸ້ນໃໝ່	6,000,600,000	18,369,315,511	-	-	-	24,369,915,511
ກຳໄລສຸດທິພາຍໃນປີ	-	-	-	-	430,451,754	430,451,754
ໂອນເປັນຄັງສຳຮອງຕາມລະບຽບການ	-	-	860,412,476	-	(860,412,476)	-
ໂອນເປັນຄັງສຳຮອງອື່ນໆ	-	-	-	1,290,618,714	(1,290,618,714)	-
ອາກອນເພີ່ມເຕີມສຳລັບປີຜ່ານມາຕາມການໄລ່ລຽງຂອງ ເຈົ້າໜ້າທີ່ສອຍສາອາກອນ	-	-	-	-	(933,587,969)	(933,587,969)
ໂອນເປັນຄັງສຳຮອງສະຫວັດດີການ	-	-	-	-	(860,412,478)	(860,412,478)
ຈ່າຍເງິນປັນຜົນ	-	-	-	-	(2,800,279,200)	(2,800,279,200)
ຍອດເຫຼືອນະວັນທີ 31 ທັນວາ 2018	**20,002,000,000**	**18,385,975,511**	**7,661,007,370**	**18,484,897,832**	**28,006,028,051**	**92,539,908,764**

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທ່ານ ຈ່າງ ລີ

ຜູ້ອຳນວຍການໃຫຍ່

3 ເມສາ 2019

ທ່ານ ຈ່າງ ຢົງຟູ

ຜູ້ຈັດການຝ່າຍການບັນຊີ - ການເງິນ

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

	ບົດອະທິບາຍເລກທີ	2018 ກີບ	2017 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ		**567,544,665**	**10,499,668,955**
ກຳໄລກ່ອນອາກອນ			
ດັດແກ້:			
ຄ່າຫຼ້ຍຫ້ຽນຊັບສິນບັດຄີງທີ່ມີຕົວຕົນ		7,200,410,610	8,011,596,157
ການປ່ຽນແປງເງິນແຮສຳລັບເຄື່ອງໃນສາງ		528,194,628	-
ການປ່ຽນແປງເງິນແຮສຳລັບໜີ້ທວງຍາກ		(674,746,038)	1,021,948,000
ຂາດທຶນສຸດທິຈາກອັດຕາແລກປ່ຽນ		87,311,602	27,346,701
ລາຍຮັບຈາກດອກເບ້ຍເງິນຝາກ		(602,443,288)	-
ລາຍຈ່າຍດອກເບ້ຍ		229,244,386	1,690,821,492
ລາຍຮັບຈາກການດຳເນີນງານ ກ່ອນການປ່ຽນແປງຂອງທຶນໝຸນວຽນ		**7,335,516,565**	**21,251,381,305**
ຫຼຸດລົງ/(ເພີ່ມຂຶ້ນ)ຂອງໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນ		4,583,170,277	(12,653,751,383)
ຫຼຸດລົງຂອງເຄື່ອງໃນສາງ		(9,539,782,464)	7,137,614,526
(ຫຼຸດລົງ)/ເພີ່ມຂຶ້ນ ຂອງໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນ		487,329,945	2,689,915,455
ລາຍຈ່າຍດອກເບ້ຍເງິນກູ້ຢືມ		(229,244,386)	(1,690,821,492)
ລາຍຈ່າຍອາກອນລາຍໄດ້		(1,081,894,498)	(3,500,917,506)
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**1,555,095,439**	**13,233,420,905**
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຈັດຊື້ຊັບສິນບັດຄີງທີ່ມີຕົວຕົນ		(3,064,407,878)	(1,803,531,547)
ເງິນຝາກມີກຳນົດ		(12,000,000,000)	-
ລາຍຮັບຈາກດອກເບ້ຍເງິນຝາກ		196,287,672	-
ກະແສເງິນສົດສຸດທິໃຊ້ໃນກິດຈະກຳການລົງທຶນ		**(14,868,120,206)**	**(1,803,531,547)**
ກະແສເງິນສົດຈາກກິດຈະກຳທາງການເງິນ			
ການຈຳໜ່າຍຮຸ້ນສຸດທິ		24,369,915,511	-
ລາຍຈ່າຍເງິນປັນຜົນ		(4,179,851,600)	(1,305,529,600)
ເງິນກູ້ຈາກທະນາຄານ		-	21,140,050,240
ຊຳລະເງິນກູ້ທະນາຄານ		(12,107,150,240)	(28,809,246,400)
ກະແສເງິນສົດສຸດທິ ຈາກ/ (ນຳໃຊ້) ໃນກິດຈະກຳການເງິນ		**8,082,913,671**	**(8,974,725,760)**
ເພີ່ມຂຶ້ນສຸດທິຂອງເງິນສົດ		(5,230,111,096)	2,455,163,598
ເງິນສົດໃນຕົ້ນປີ		11,479,523,628	9,045,254,364
ຜົນກະທົບຈາກອັດຕາແລກປ່ຽນ		-	(20,894,334)
ເງິນສົດທ້າຍໃນທ້າຍປີ	**10**	**6,249,412,532**	**11,479,523,628**

ທ່ານ ຈ່ານຈ້ອງ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຢົງຟູ
ຜູ້ຈັດການຝ່າຍການບັນຊີ - ການເງິນ

3 ເມສາ 2019

ບໍລິສັດ ຊິມັ້ງລາວ ມະຫາຊົນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ
ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

1. ຂໍ້ມູນບໍລິສັດ

ບໍລິສັດ ຊິມັ້ງລາວ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ຊິມັ້ງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນ ຂອງບໍລິສັດທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດ ທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI) ("ຝ່າຍ ກ") ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ (CYC) ("ຝ່າຍ ຂ").

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກ ອອກໂດຍ ກະຊວງອຸດສະຫະກຳ ແລະ ການ ຄ້າ, ເຊິ່ງບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊີມັ້ງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊີມັ້ງ ເພື່ອການ ຈຳໜ່າຍພາຍໃນ ແລະ ສົ່ງອອກ.

ບໍລິສັດໄດ້ມີການປັບປຸງໃບທະບຽນວິສາຫະກິດດັ່ງລຸ່ມນີ້:

ໃບທະບຽນວິສາຫະກິດ	*ວັນທີ*
0078/ຈທກ	5 ເມສາ 2006
1719/ຈທກ	26 ກຸມພາ 2009
0244/ຈທກ	20 ກຸມພາ 2012
1436/ຈທກ	15 ພະຈິກ 2012
791/ຈທກ	13 ພະຈິກ 2015
1016/ຈທກ	5 ທັນວາ 2016
0247/ຈທກ	24 ມີນາ 2017
0688/ຈທກ	2 ສິງຫາ 2017
0160/ຈທກ	20 ກຸມພາ 2018

ພາຍໃນປີ, ກິດຈະກຳຫຼັກຂອງບໍລິສັດແມ່ນມີດັ່ງນີ້:

- ຜະລິດຊີມັ້ງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊີມັ້ງ;
- ຂາຍສົ່ງ ແລະ ຂາຍຍ່ອຍຊີມັ້ງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊີມັ້ງສຳລັບການບໍລິໂພກພາຍໃນ ແລະ ສົ່ງອອກ.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ຖະໜົນໜອງບອນ, ບ້ານໜອງບອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງ ຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊີມັ້ງວັງວຽງ ຫຼັງ 2 ຢູ່ເມືອງວັງວຽງ, ແຂວງ ວຽງຈັນ, ສປປ ລາວ.

ນະວັນທີ 31 ທັນວາ 2018 ບໍລິສັດມີພະນັກງານ 394 ຄົນ (31 ທັນວາ 2017 ພະນັກງານ 410 ຄົນ).

2. ພື້ນຖານການກະກຽມເອກະສານລາຍງານການເງິນ

ເອກະສານລາຍງານການເງິນຂອງບໍລິສັດ ແມ່ນໄດ້ຖືກກະກຽມໂດຍນຳໃຊ້ຫຼັກການຕົ້ນທຶນເດີມ. ເອກະສານລາຍງານການເງິນ ສະບັບນີ້ແມ່ນໄດ້ຖືກລາຍງານເປັນສະກຸນເງິນກີບລາວ ("ກີບ") ເຊິ່ງເປັນສະກຸນເງິນຫຼັກທີ່ນຳໃຊ້ໃນການດຳເນີນທຸລະກິດຂອງ ບໍລິສັດ.

ເອກະສານລາຍງານການເງິນຂອງບໍລິສັດ ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີເຊິ່ງໄດ້ລະບຸໄວ້ໃນບົດ ອະທິບາຍ ເລກທີ 3 ເອກະສານລາຍງານການເງິນ. ນະໂຍບາຍການບັນຊີດັ່ງກ່າວ ບໍ່ໄດ້ມີວັດຖຸປະສົງໃນການນຳສະເໜີຖານະ ການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດຂອງບໍລິສັດຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

2. ພື້ນຖານການກະກຽມເອກະສານລາຍງານການເງິນ (ຕໍ່)

ເອກະສານລາຍງານການເງິນ ແມ່ນຖືກກະກຽມເພື່ອນຳໃຊ້ໃນການລາຍງານຕາມຄວາມຮຽກຮ້ອງຕ້ອງການຂອງ ຜູ້ຖືຮຸ້ນເທົ່ານັ້ນ. ດັ່ງນັ້ນ, ເອກະສານລາຍງານການເງິນດັ່ງກ່າວອາດຈະບໍ່ເໝາະສົມສຳລັບຈຸດປະສົງອື່ນ ແລະ ແຈກຢາຍໃຫ້ ຫຼື ນຳໃຊ້ໂດຍພາກສ່ວນອື່ນ.

ປີການບັນຊີ

ປີການບັນຊີຂອງບໍລິສັດແມ່ນ ເລີ່ມຈາກ ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ຊັບສິນບັດຄົງທີ່ມີຕົວຕົນ

ຊັບສິນບັດຄົງທີ່ມີຕົວຕົນແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼ້ຍຫ້ຽນສະສົມ.

ຕົ້ນທຶນຂອງຊັບສິນບັດຄົງທີ່ມີຕົວຕົນທີ່ຊື້ໂດຍບໍລິສັດ ເຊິ່ງປະກອບດ້ວຍລາຄາຊື້ ແລະ ທຸກຄ່າໃຊ້ຈ່າຍທີ່ຕິດພັນໂດຍກົງທີ່ເກີດຂຶ້ນໃນການເຮັດໃຫ້ຊັບສິນໃຫ້ຢູ່ໃນສະພາບທີ່ສາມາດໃຊ້ງານຕາມຈຸດປະສົງຂອງການນຳໃຊ້. ລາຍຈ່າຍສຳລັບການເພີ່ມເຕີມ, ການປັບປຸງ ແລະ ການຟື້ນຟູແມ່ນບັນທຶກເຂົ້າໃນມູນຄ່າຕົ້ນທຶນໃນຂະນະທີ່ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ການສ້ອມແປງແມ່ນບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ.

ເມື່ອຊັບສິນບັດຄົງທີ່ມີຕົວຕົນໄດ້ຖືກຂາຍ ຫຼື ສະສາງ, ຕົ້ນທຶນ ແລະ ຄ່າຫຼ້ຍຫ້ຽນສະສົມ ແມ່ນຈະຖືກຕັດອອກຈາກ ໃບລາຍງານຖານະການເງິນ ແລະ ທຸກໆກຳໄລ ຫຼື ຂາດທຶນຈາກການສະສາງ ແມ່ນຈະຖືກລວມຢູ່ໃນລາຍຮັບການດຳເນີນງານອື່ນໆ ຫຼື ບັນຊີລາຍຈ່າຍ ໃນໃບລາຍງານຜົນການດຳເນີນງານຕາມລຳດັບ.

ຊັບສິນພວມກໍ່ສ້າງ ສະແດງເຖິງຊັບສິນພາຍໃຕ້ການກໍ່ສ້າງ ເຊິ່ງປະກອບມີຄ່າໃຊ້ຈ່າຍໃນການກໍ່ສ້າງ ແລະ ຄ່າໃຊ້ຈ່າຍໂດຍກົງອື່ນໆ.

ຊັບສິນທີ່ຖືກຫັກຄ່າຫຼ້ຍຫ້ຽນໝົດຕາມອາຍຸການນຳໃຊ້ຈະຖືກເກັບຮັກສາໄວ້ໃນບັນຊີ ຈົນກວ່າຈະບໍ່ມີການນຳໃຊ້ ແລະ ຈະບໍ່ມີຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າເພີ່ມເຕີມໃດໆ ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານອີກ.

ຄ່າຫຼ້ຍຫ້ຽນ

ການຫັກຄ່າຫຼ້ຍຫ້ຽນຂອງຊັບສິນບັດຄົງທີ່ມີຕົວຕົນ ແມ່ນນຳໃຊ້ວິທີຄິດໄລ່ແບບສະເໝີຕົ້ນຕາມອາຍຸການນຳໃຊ້ຂອງຊັບສິນແຕ່ລະປະເພດດັ່ງນີ້:

ອາຄານ ແລະ ສິ່ງປຸກສ້າງ	5 ຫາ 20 ປີ
ເຄື່ອງຈັກ ແລະ ອຸປະກອນ	5 ປີ
ພາຫະນະຂົນສົ່ງ	5 ປີ
ການປັບປຸງສິດທິໃນການເຊົ່າ	10 ປີ
ເຄື່ອງໃຊ້ຫ້ອງການ	10 ປີ
ຊັບສິນອື່ນໆ	10 ປີ

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຊັບສິນບັດຄົງທີ່ມີຕົວຕົນ (ຕໍ່)

ຄ່າຫຼຸ້ຍຫ້ຽນ (ຕໍ່)

ການຫັກຄ່າຫຼຸ້ຍຫ້ຽນຂອງຊັບສິນບັດຄົງທີ່ມີຕົວຕົນທີ່ຊື້ເພີ່ມ ແລະ ສະສາງອອກພາຍໃນປີ ແມ່ນຄິດໄລ່ອີງຕາມສັດສ່ວນໄລຍະເວລາໃນການນຳໃຊ້ນັບແຕ່ມື້ທີ່ເລີ່ມຕົ້ນນຳໃຊ້ ແລະ ມື້ທີ່ສະສາງອອກຕົວຈິງ. ສຳລັບຊັບສິນພວມກໍ່ສ້າງແມ່ນ ບໍ່ມີການຫັກຄ່າຫຼຸ້ຍຫ້ຽນຈົນກວ່າຈະເຖິງເວລາທີ່ຊັບສິນດັ່ງກ່າວສຳເລັດ ແລະ ຖືກນຳໃຊ້.

ຊັບສິນບັດຄົງທີ່ທີ່ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ທີ່ບໍ່ມີຕົວຕົນ ໝາຍເຖິງສິດໃນການນຳໃຊ້ທີ່ດິນທີ່ບໍ່ກຳນົດໄລຍະເວລາການນຳໃຊ້ ແລະ ຖືກລາຍງານໃນມູນຄ່າຕົ້ນທຶນ. ຕົ້ນທຶນຂອງສິດໃນການນຳໃຊ້ທີ່ດິນ ເຊິ່ງປະກອບດ້ວຍ ລາຄາຊື້ ແລະ ຕົ້ນທຶນໂດຍກົງຕ່າງໆແມ່ນຈະບໍ່ມີການຫັກຄ່າເສື່ອມ.

ຊັບສິນບໍ່ໝຸນວຽນອື່ນໆ

ຊັບສິນທີ່ຈັດຊື້, ຄຸ້ມຄອງ ແລະ ນຳໃຊ້ໂດຍບໍລິສັດ ເຊິ່ງອອກຊື່ພາຍໃຕ້ຊື່ຂອງພາກສ່ວນກ່ຽວຂ້ອງອື່ນ ແມ່ນຈະລາຍງານເປັນຊັບສິນບໍ່ໝຸນວຽນອື່ນໆຂອງບໍລິສັດ. ຄ່າຫຼຸ້ຍຫ້ຽນແມ່ນຖືກຄິດໄລ່ ແບບສະເໝີຕົວຕາມອາຍຸການນຳໃຊ້ຕະຫຼອດໄລຍະ 20 ປີ.

ເຄື່ອງໃນສາງ

ເຄື່ອງໃນສາງແມ່ນຖືກສະແດງໃນມູນຄ່າທີ່ຕ່ຳກວ່າຕົ້ນທຶນທີ່ເກີດຂຶ້ນໃນການນຳເອົາເຄື່ອງໃນສາງມາຢູ່ໃນສະຖານທີ່ ແລະ ສະພາບໃນປັດຈຸບັນ ແລະ ຖືກຮັບຮູ້ຕາມມູນຄ່າສຸດທິທີ່ໄດ້ຮັບ.

ມູນຄ່າສຸດທິທີ່ໄດ້ຮັບ ແມ່ນລາຄາທີ່ຄາດວ່າຈະຂາຍຕາມເງື່ອນໄຂທາງທຸລະກິດທົ່ວໄປ ລົບຄ່າໃຊ້ຈ່າຍຄາດຄະເນ ທີ່ຈະເຮັດໃຫ້ເປັນສິນຄ້າສຳເລັດຮູບ ແລະ ຄ່າໃຊ້ຈ່າຍຄາດຄະເນທີ່ເກີດຂຶ້ນຈາກການຂາຍ.

ລະບົບການຕິດຕາມສາງເປັນໄລຍະ ແມ່ນຖືກນຳໃຊ້ໃນການບັນທຶກເຄື່ອງໃນສາງເຊິ່ງຖືກຕີມູນຄ່າດັ່ງຕໍ່ໄປນີ້:

ວັດຖຸດິບ	- ຕົ້ນທຶນແມ່ນ ຄິດໄລ່ຕາມການຕົ້ນທຶນສະເລ່ຍຖ່ວງໜັກ.
ສິນຄ້າກຳລັງຜະລິດ ແລະ ສິນຄ້າສຳເລັດຮູບ	- ຕົ້ນທຶນຂອງວັດຖຸດິບ ແລະ ຄ່າແຮງງານທາງກົງບວກກັບຄ່າໃຊ້ຈ່າຍການຜະລິດໂດຍອີງໃສ່ຄວາມສາມາດປະຕິບັດງານປົກກະຕິ ບົນພື້ນຖານມູນຄ່າຕົ້ນທຶນສະເລ່ຍຖ່ວງໜັກ

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງແມ່ນເກີດຈາກການປະເມີນການສູນເສຍທີ່ເກີດຂຶ້ນຍ້ອນການເສື່ອມມູນຄ່າ (ຈາກການຫຼຸດລົງ, ຄວາມເສຍຫາຍ, ການລ້າສະໄໝ ແລະ ອື່ນໆ) ຂອງເຄື່ອງໃນສາງ ໂດຍປະເມີນຕາມຫລັກຖານທີ່ເໝາະສົມຂອງການເສື່ອມມູນຄ່າທີ່ມີຢູ່ນະວັນທີຂອງໃນລາຍງານຖານະການເງິນ.

ການເພີ່ມຂຶ້ນ ແລະ ຫຼຸດລົງຂອງຍອດເງຶນແຮແມ່ນບັນທຶກເຂົ້າຕົ້ນທຶນໃນການຂາຍ ແລະ ການຈຳໜ່າຍ ສະແດງໃນໃບລາຍງານຜົນການດຳເນີນງານ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ໜີ້ຕ້ອງຮັບການຄ້າ ແລະ ເງິນແຮໜີ້ຫວຍຍາກ

ໜີ້ຕ້ອງຮັບການຄ້າ ແມ່ນສະແດງຕາມມູນຄ່າສຸດທິຂອງ ໜີ້ຕ້ອງຮັບການຄ້າທັງໝົດ ແລະ ເງິນແຮໜີ້ຫວຍຍາກ.

ບໍລິສັດມີນະໂຍບາຍເງິນແຮໜີ້ຕ້ອງຮັບຫວຍຍາກສຳລັບໜີ້ຕ້ອງຮັບການຄ້າ ໂດຍອີງຕາມຈຳນວນມື້ການກຳນົດຂອງໜີ້ຕ້ອງຮັບການຄ້າດັ່ງລຸ່ມນີ້:

ໄລຍະການກຳນົດ	*ອັດຕາເງິນແຮ*
6 ເດືອນ ຫາ 1 ປີ	30%
1 ປີ ຫາ 2 ປີ	50%
ຫຼາຍກວ່າ 2 ປີ	100%

ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງ ແລະ ເງິນຝາກທະນາຄານ.

ຕົ້ນທຶນເງິນກູ້

ຕົ້ນທຶນເງິນກູ້ ປະກອບດ້ວຍດອກເບ້ຍ ແລະ ລາຍຈ່າຍອື່ນໆທີ່ເກີດຂຶ້ນ ທີ່ກ່ຽວຂ້ອງກັບການກູ້ຢືມເງິນທຶນ. ຕົ້ນທຶນເງິນກູ້ ແມ່ນຖືກບັນທຶກເປັນລາຍຈ່າຍພາຍໃນໄລຍະທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

ໜີ້ຕ້ອງສົ່ງທາງການຄ້າ, ລາຍຈ່າຍຄ້າງຈ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງ ແລະ ລາຍຈ່າຍຄ້າງຈ່າຍ ຈະຖືກຮັບຮູ້ເປັນຈຳນວນທີ່ຕ້ອງຈ່າຍໃນອານາຄົດ ສຳລັບສິນຄ້າ ແລະ ການບໍລິການທີ່ໄດ້ຮັບ, ບໍ່ວ່າໃບເກັບເງິນຈະຖືກສົ່ງ ຫຼື ຍັງບໍ່ສົ່ງໃຫ້ບໍລິສັດກໍ່ຕາມ.

ທຶນຈົດທະບຽນຕາມກົດໝາຍທີ່ຖອກແລ້ວ

ທຶນຈົດທະບຽນຕາມກົດໝາຍທີ່ຖອກແລ້ວ ຈະຖືກຮັບຮູ້ໃນໃບລາຍງານຖານະການເງິນເມື່ອໄດ້ຮັບເງິນຈາກຂາຮຸ້ນ ໃນກໍລະນີທີ່ຖອກທຶນຈົດທະບຽນເປັນເງິນສົດ ຫຼື ເມື່ອມີການອະນຸມັດຈາກຂາຮຸ້ນໃນກໍລະນີທີ່ບໍ່ແມ່ນເງິນສົດ ແລະ ໃບຢັ້ງຢືນຮຸ້ນຖືກອອກໃຫ້. ທຸກໆທຶນຈົດທະບຽນທີ່ຍັງບໍ່ທັນຖອກໂດຍອີງຕາມກົດລະບຽບຂອງບໍລິສັດ, ໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນແມ່ນບໍ່ໄດ້ຖືກຮັບຮູ້ໃນໃບລາຍງານຖານະການເງິນ.

ສ່ວນເກີນມູນຄ່າຮຸ້ນ

ສ່ວນເກີນມູນຄ່າຮຸ້ນຖືກຮັບຮູ້ເວລາມີການອອກຮຸ້ນເພີ່ມ, ມະມູນຄ່າສ່ວນເກີນລະຫວ່າງລາຄາສະເໜີຂາຍຂອງຮຸ້ນທີ່ອອກເພີ່ມ ແລະ ມູນຄ່າໜ້າບັດ, ຫຼັງຈາກຫັກຕົ້ນທຶນຕ່າງໆທີ່ກ່ຽວຂ້ອງກັບການອອກຮຸ້ນ (ເຊັ່ນ: ຄ່າທຳນຽມການຄ້ຳປະກັນການອອກຮຸ້ນ ແລະ ລ່າຍຈ່າຍຕ່າງໆທີ່ກ່ຽວຂ້ອງໃນການຕີມູນຄ່າ, ລາຍຈ່າຍຄ່າທີ່ປຶກສາ).

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຄ້ຳສຳຮອງ

ອີງຕາມກົດໝາຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013, ບໍລິສັດມະຫາຊົນຖືກຮຽກຮ້ອງໃຫ້ມີການຫັກກຳໄລສຸດທິຕາມຈຳນວນທີ່ເໝາະສົມເຂົ້າເປັນຄ້ຳແຮຕາມລະບຽບການ.

ຄ້ຳແຮຕາມລະບຽບການເປັນຄ້ຳສຳຮອງເພື່ອຮັບປະກັນຄວາມສ່ຽງທີ່ຈະເກີດຂຶ້ນ, ເຊິ່ງ 10% ຂອງກຳໄລສຸດທິຈະຖືກຫັກເຂົ້າໃນຄ້ຳສຳຮອງດັ່ງກ່າວ, ຫຼັງຈາກຫັກຂາດທຶນສະສົມ. ເມື່ອຄ້ຳແຮດັ່ງກ່າວຫາກມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນ, ບໍລິສັດ ອາດຈະໂຈະການຫັກກຳໄລເຂົ້າຄ້ຳແຮດັ່ງກ່າວ, ເວັ້ນເສຍແຕ່ໄດ້ຮັບອະນຸມັດຈາກເຈົ້າຂອງບໍລິສັດ.

ຄ້ຳແຮອື່ນໆປະກອບມີ ຄ້ຳສຳຮອງສະຫວັດດີການ ແລະ ຄ້ຳສຳຮອງເພື່ອຂະຫຍາຍກິດຈະການເຊິ່ງຫັກຈາກກຳໄລສະສົມຕາມຄວາມເໝາະສົມອີງຕາມກົດລະບຽບພາຍໃນຂອງບໍລິສັດ ລົງວັນທີ 15 ທັນວາ ປີ 1998. ອັດຕາເງິນແຮທີ່ເໝາະສົມຈະຖືກພິຈາລະນາໂດຍສະພາບໍລິຫານຂອງບໍລິສັດໃນແຕ່ລະປີ.

ຄ້ຳແຮຂອງປີການບັນຊີປັດຈຸບັນຖືກຫັກຈາກກຳໄລສຸດທິຂອງປີຜ່ານມາຕາມການອະນຸມັດໃນກອງປະຊຸມຂາຮຸ້ນປະຈຳປີ.

ເງິນຕາຕ່າງປະເທດ

ເອກະສານລາຍງານເງິນ ຖືກລາຍງານເປັນສະກຸນເງິນກີບລາວ ເຊິ່ງເປັນສະກຸນເງິນທີ່ບໍລິສັດໃຊ້ໃນການເຄື່ອນໄຫວ ແລະ ລາຍງານ. ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນອື່ນໆນອກເໜືອຈາກສະກຸນເງິນກີບ ແມ່ນຈະຖືກບັນທຶກໃນເບື້ອງຕົ້ນໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເຄື່ອນໄຫວເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕ່າງປະເທດ ແມ່ນຈະຖືກປ່ຽນເປັນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານຖານະການເງິນ. ກຳໄລ ແລະ ຂາດທຶນທັງໝົດຈະຖືກບັນທຶກເປັນລາຍຮັບທາງການເງິນ ແລະ ລາຍຈ່າຍທາງການເງິນຕາມລຳດັບໃນໃບລາຍງານຜົນການດຳເນີນງານ.

ການຮັບຮູ້ລາຍຮັບ

ລາຍຮັບຈະຖືກຮັບຮູ້ ເມື່ອມີຄວາມເປັນໄປໄດ້ວ່າ ຜົນປະໂຫຍດທາງດ້ານເສດຖະກິດຈະໄດ້ຮັບໂດຍບໍລິສັດ ແລະ ລາຍຮັບດັ່ງກ່າວຕ້ອງສາມາດວັດແທກໄດ້ຢ່າງສົມເຫດສົມຜົນ. ລາຍຮັບຈະຖືກວັດແທກດ້ວຍມູນຄ່າຍຸດຕິທຳຂອງລາຍຮັບ ຫຼື ໜີ້ຕ້ອງຮັບທີ່ຖືກພິຈາລະນາ, ໂດຍບໍ່ລວມສ່ວນຫຼຸດທາງການຄ້າ, ການສົ່ງຄືນ ແລະ ການຮັບສິນຄ້າຄືນ. ເງື່ອນໄຂສະເພາະໃນການຮັບຮູ້ດັ່ງຕໍ່ໄປນີ້ຕ້ອງສອດຄ່ອງກ່ອນລາຍຮັບຈະຖືກຮັບຮູ້:

ການຂາຍສິນຄ້າ

ລາຍຮັບຈະຖືກຮັບຮູ້ເມື່ອຄວາມສ່ຽງອັນໃຫຍ່ຫຼວງ ແລະ ຜົນຕອບແທນຂອງການເປັນເຈົ້າຂອງຕໍ່ສິນຄ້າໄດ້ຖືກໂອນຜ່ານໄປຍັງຜູ້ຊື້, ໂດຍທົ່ວໄປ ແມ່ນອີງຕາມການຂົນສົ່ງສິນຄ້າ.

ດອກເບ້ຍ

ລາຍຮັບຈະຖືກຮັບຮູ້ເມື່ອມີດອກເບ້ຍຄ້າງຮັບ (ໂດຍຄຳນຶງເຖິງປະສິດທິພາບຂອງຊັບສິນ) ເວັ້ນເສຍແຕ່ວ່າມີຂໍ້ສົງໄສໃນການເກັບໜີ້.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ອາກອນ

ອາກອນກຳໄລ ແມ່ນການຄາດຄະເນໜີ້ຕ້ອງສົ່ງອາກອນ ຕາມກຳໄລທີ່ຕ້ອງເສຍອາກອນພາຍໃນປີ, ໂດຍນຳໃຊ້ອັດຕາອາກອນກຳໄລທີ່ປະກາດໃຊ້ນະມື້ຂອງໃບລາຍງານຖານະການເງິນ ແລະ ນຳໃຊ້ໃນໄລຍະຂອງການນຳໃຊ້ບົດລາຍງານ ແລະ ທຸກໆການດັດແກ້ຂອງໜີ້ຕ້ອງສົ່ງອາກອນກຳໄລຂອງປີທີ່ຜ່ານມາ.

ໜີ້ຕ້ອງສົ່ງອາກອນອື່ນໆ ປະກອບມີ ອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ຂອງພະນັກງານ.

ອາກອນມູນຄ່າເພີ່ມແມ່ນອາກອນທີ່ຕ້ອງຈ່າຍໂດຍກຳນົດຈາກລາຍຮັບສຳລັບໄລຍະທີ່ມີການຄິດໄລ່ ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມໃນແຕ່ລະໄລຍະ.

ອາກອນລາຍໄດ້ ແມ່ນອາກອນທີ່ຕ້ອງຈ່າຍໃນມູນຄ່າເງິນເດືອນທີ່ຈ່າຍໃຫ້ພະນັກງານຂອງໄລຍະດັ່ງກ່າວ ເຊິ່ງຄິດໄລ່ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມໃນແຕ່ລະໄລຍະ.

ທຸກໆການດັດແກ້ທີ່ກ່ຽວກັບມູນຄ່າຂອງອາກອນຕ້ອງຈ່າຍຂອງປີທີ່ຜ່ານມາ ເຊິ່ງມີຜົນມາຈາກການໄຕ່ລວງອາກອນຂອງເຈົ້າໜ້າທີ່ສ່ວຍສາອາກອນແມ່ນໄດ້ບັນທຶກໂດຍກົງໃນກຳໄລສະສົມ.

ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນຕ່າງໆຖືກພິຈາລະນາເປັນພາກສ່ວນທີ່ກ່ຽວຂ້ອງ ຖ້າຫາກວ່າ ພາກສ່ວນດັ່ງກ່າວມີຄວາມສາມາດໃນການຄວບຄຸມ ຫຼື ມີອິດທິພົນທີ່ສຳຄັນຕໍ່ກັນ ໃນການຕັດສິນໃຈທາງດ້ານການເງິນ ແລະ ການດຳເນີນງານ ຫຼື ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ ຫຼື ມີອິດທິພົນທີ່ສຳຄັນຮ່ວມກັນ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງແມ່ນເກີດຂຶ້ນໂດຍອີງຕາມລາຄາຕະຫຼາດ ຫຼື ອີງຕາມການເຫັນດີ ແລະ ຕົກລົງກັນຕາມສັນຍາໃນກໍລະນີທີ່ບໍ່ມີລາຄາຕະຫຼາດ.

4. ຊັບສິນບັດຄົງທີ່ມີຕົວຕົນ

	ອາຄານ ແລະ ສິ່ງປຸກສ້າງ	*ເຄື່ອງຈັກ ແລະ ອຸປະກອນ*	*ພາຫະນະຂົນສົ່ງ*	*ສິດທິໃນການເຊົ່າ*	*ເຄື່ອງໃຊ້ຫ້ອງການ*	*ຊັບສິນອື່ນໆ*	*ລວມ*
	ກີບ	*ກີບ*	*ກີບ*	*ກີບ*	*ກີບ*	*ກີບ*	*ກີບ*
ຕົ້ນທຶນ							
ນະວັນທີ 1 ມັງກອນ 2018	134,001,137,634	210,889,233,994	19,602,252,498	1,770,215,102	2,050,665,180	436,983,816	368,750,488,224
ຮັບເຂົ້າໃນປີ	-	-	586,219,700	58,347,023	19,402,396	-	663,969,119
ສະສາງອອກ	-	-	-	(44,777,500)	-	-	(44,777,500)
ວັນທີ 31 ທັນວາ 2018	134,001,137,634	210,889,233,994	20,188,472,198	1,783,784,625	2,070,067,576	436,983,816	369,369,679,843
ຄ່າຫຼຸ້ຍຫ້ຽນສະສົມ							
ນະວັນທີ 1 ມັງກອນ 2018	102,694,656,180	207,622,918,827	19,141,180,655	1,460,065,019	1,862,420,722	426,662,157	333,207,903,560
ຫັກຄ່າຫຼຸ້ຍຫ້ຽນໃນປີ	6,664,354,608	911,550,957	132,889,340	84,364,621	76,101,460	10,321,659	7,879,582,645
ສະສາງອອກ	-	-	-	(44,777,500)	-	-	(44,777,500)
ວັນທີ 31 ທັນວາ 2018	109,359,010,788	208,534,469,784	19,274,069,995	1,499,652,140	1,938,522,182	436,983,816	341,042,708,705
ມູນຄ່າສຸດທິ							
ວັນທີ 31 ທັນວາ 2017	31,306,481,454	3,266,315,167	461,071,843	310,150,083	188,244,458	10,321,659	35,542,584,664
ວັນທີ 31 ທັນວາ 2018	24,642,126,846	2,354,764,210	914,402,203	284,132,485	131,545,394	-	28,326,971,138

5. ຊັບສິນພວມກໍ່ສ້າງ

	31 ທັນວາ 2018	*31 ທັນວາ 2017*
	ກີບ	*ກີບ*
ໂຄງການຂຸດຄົ້ນບໍ່ແຮ່ ຄອນພຸກ	4,477,967,580	3,275,364,082
ໂຄງການກໍ່ສ້າງໂຮງງານໄລຍະສອງ	2,385,021,904	1,142,409,144
	6,862,989,484	**4,417,773,226**

6. ຊັບສິນບໍ່ໝຸນວຽນອື່ນໆ

ຊັບສິນບໍ່ໝຸນວຽນອື່ນໆ ແມ່ນສະແດງເປັນມູນຄ່າສຸດທິຂອງທີ່ດິນ ແລະ ເຮືອນ ເຊິ່ງຊື້ໂດຍບໍລິສັດ ແຕ່ຈົດທະບຽນພາຍໃຕ້ຊື່ ທ່ານ ວັນທອງ ສິດທິກຸນ ອະດີດ ຜູ້ອຳນວຍການໃຫຍ່ຂອງບໍລິສັດ.

7. ເຄື່ອງໃນສາງ

	31 ທັນວາ 2018	*31 ທັນວາ 2017*
	ກີບ	*ກີບ*
ວັດຖຸດິບ ແລະ ວັດຖຸສິ້ນເປືອງຕ່າງໆ	7,165,325,755	4,886,547,920
ອຸປະກອນ ແລະ ວັດສະດຸ	12,573,847,789	13,156,886,482
ສິນຄ້າພວມຜະລິດ	17,369,090,233	5,717,488,331
ຜະລິດຕະພັນສຳເລັດຮູບ	3,907,764,222	7,080,928,266
ເງິນແຮສຳລັບເຄື່ອງໃນສາງ	(528,194,628)	-
	40,487,833,371	**30,841,850,999**

8. ໜີ້ຕ້ອງຮັບການຄ້າ

	31 ທັນວາ 2018	*31 ທັນວາ 2017*
	ກີບ	*ກີບ*
ໜີ້ຕ້ອງຮັບການຄ້າ	39,706,280,475	44,165,746,857
ເງິນແຮໜີ້ຕ້ອງຮັບທວງຍາກ	(1,409,478,342)	(2,084,224,380)
	38,296,802,133	**42,081,522,477**

ລາຍລະອຽດຂອງເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ນະວັນທີ 31 ທັນວາ 2018 ມີດັ່ງນີ້:

ໄລຍະກາຍກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
6 ເດືອນ ຫາ 1 ປີ	930,025,400	279,007,620
1 ປີ ຫາ 2 ປີ	386,548,200	193,274,100
ຫຼາຍກວ່າ 2 ປີ	937,196,622	937,196,622
ລວມ	**2,253,770,222**	**1,409,478,342**

8. ໜີ້ຕ້ອງຮັບການຄ້າ (ຕໍ່)

ລາຍລະອຽດຂອງເງິນແຮສຳລັບໜີ້ຕ້ອງຮັບທ່ວງຍາກ ນະວັນທີ 31 ທັນວາ 2017 ມີດັ່ງນີ້:

ໄລຍະການກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
6 ເດືອນ ຫາ 1 ປີ	2,709,695,422	812,908,627
1 ປີ ຫາ 2 ປີ	1,245,855,387	622,927,693
ຫຼາຍກ່ວາ 2 ປີ	648,388,060	648,388,060
ລວມ	**4,603,938,869**	**2,084,224,380**

9. ການລົງທຶນໄລຍະສັ້ນ

ການລົງທຶນໄລຍະສັ້ນສະແດງເຖິງເງິນຝາກໄລຍະສັ້ນເປັນສະກຸນເງິນ ກີບ ກັບສະຖາບັນການເງິນພາຍໃນທ້ອງຖິ່ນ. ເງິນຝາກດັ່ງກ່າວແມ່ນຈະໄດ້ຮັບດອກເບ້ຍໃນອັດຕາດອກເບ້ຍ 5.59% ຕໍ່ປີ.

10. ເງິນສົດ

	31 ທັນວາ 2018 *ກີບ*	*31 ທັນວາ 2017* *ກີບ*
ເງິນສົດໃນຄັງ	467,368,462	491,367,723
ເງິນຝາກທະນາຄານ	5,782,044,070	10,988,155,905
	6,249,412,532	**11,479,523,628**

11. ພັນທະອາກອນ

	31 ທັນວາ 2018 *ກີບ*	*31 ທັນວາ 2017* *ກີບ*
ອາກອນຕ້ອງສົ່ງຈາກຜູ້ສະໜອງຕ່າງປະເທດ	2,602,263,634	2,589,076,770
ອາກອນມູນຄ່າເພີ່ມສິ້ນອອກ	3,209,726,878	2,690,501,806
ໜີ້ຕ້ອງສົ່ງອາກອນກຳໄລ *(ບົດອະທິບາຍເລກທີ 22)*	876,381,305	1,821,182,892
ອາກອນອື່ນໆ	1,227,628,909	83,392,680
	7,916,000,726	**7,184,154,148**

12. ຄັງສຳຮອງສະຫວັດດີການ

	2018	*2017*
	ກີບ	*ກີບ*
ນະວັນທີ 1 ມັງກອນ	5,380,508,915	8,002,865,857
ຫັກຈາກກຳໄລສະສົມ	860,412,476	580,367,002
ຈ່າຍອອກ	(4,362,422,526)	(3,202,723,944)
ນະວັນທີ 31 ທັນວາ	**1,878,498,865**	**5,380,508,915**

13. ໜີ້ຕ້ອງສິ່ງອື່ນໆ

	31 ທັນວາ 2018	*31 ທັນວາ 2017*
	ກີບ	*ກີບ*
ໜີ້ຕ້ອງສິ່ງເງິນປັນຜົນ (*)	13,581,539,960	15,240,964,360
ໜີ້ຕ້ອງສິ່ງອື່ນໆ	164,670,927	71,384,410
	13,746,210,887	**15,312,348,770**

(*) ລາຍລະອຽດຂອງການຈ່າຍເງິນປັນຜົນມີດັ່ງນີ້:

	31 ທັນວາ 2018	*31 ທັນວາ 2017*
	ກີບ	*ກີບ*
ໜີ້ຕ້ອງສິ່ງເງິນປັນຜົນ ປະຈຳປີ 2017	-	-
ໜີ້ຕ້ອງສິ່ງເງິນປັນຜົນ ປະຈຳປີ 2016	3,395,146,565	3,395,146,965
ໜີ້ຕ້ອງສິ່ງເງິນປັນຜົນ ປະຈຳປີ 2015	5,773,056,205	5,773,056,205
ໜີ້ຕ້ອງສິ່ງເງິນປັນຜົນ ປະຈຳປີ 2014	4,413,161,190	4,810,162,990
ໜີ້ຕ້ອງສິ່ງເງິນປັນຜົນ ປະຈຳປີ 2013	-	1,262,598,200
	13,581,363,960	**15,240,964,360**

14. ທຶນຈົດທະບຽນຕາມກົດໝາຍທີ່ຖອກເລ້ວ

14.1 ຮຸ້ນ

	31 ທັນວາ 2018		*31 ທັນວາ 2017*	
	ຈຳນວນ	*ມູນຄ່າ (ກີບ)*	*ຈຳນວນ*	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ຮັບອະນຸຍາດ				
ຮຸ້ນທີ່ໄດ້ອອກ ແລະ ຈ່າຍ				
ຮຸ້ນສາມັນ	40,004,000	20,002,000,000	28,002,800	14,001,400,000

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ເລກທີ 0008/ສຄຄຊ ອອກໃຫ້ໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ເນື່ອງຈາກວ່າບໍລິສັດໄດ້ສຳເລັດຂັ້ນຕອນ IPO ເຊິ່ງຮຸ້ນຈຳນວນ 12,001,200 ຮຸ້ນ ລາຄາໜ້າບັດ 500 ກີບ/ຮຸ້ນ ແລະ ລາຄາຂາຍຮຸ້ນມູນຄ່າ 2,400 ກີບ/ຮຸ້ນ ໄດ້ຖືກຂາຍອອກ.

ມູນຄ່າຂອງຮຸ້ນທັ້ງໝົດ 40,004,000 ຮຸ້ນຂອງບໍລິສັດ (ພາຍໃຕ້ການເຈົ້າຂອງ "ຊິມັ່ງລາວ") ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບ ນະວັນທີ 2 ມີນາ 2018. ມູນຄ່າໜ້າບັດຂອງແຕ່ລະຮຸ້ນແມ່ນ 500 ກີບ.

14.2 ເງິນປັນຜົນ

	31 ທັນວາ 2018	*31 ທັນວາ 2017*
	ກີບ	*ກີບ*
ເງິນປັນຜົນຕ້ອງຈ່າຍພາຍໃນປີ	**2,800,279,200**	**3,772,385,517**
ເງິນປັນຜົນຂອງຮຸ້ນສາມັນສຳລັບ 2017: 63 ກີບ ຕໍ່ ຮຸ້ນ (2016: 121)	2,800,279,200	3,772,385,517

15. ລາຍຮັບຈາກການຂາຍສິນຄ້າ

	2018	*2017*
	ກີບ	*ກີບ*
ຂາຍຊິມັ່ງເປົ້າ	37,427,943,321	52,306,118,477
ຂາຍຊິມັ່ງຜົງ	59,983,662,325	76,546,665,437
ຂາຍກະລິງເກົ່າ	-	1,663,520,455
	97,411,605,646	**130,516,304,369**

16. ຕົ້ນທຶນຈາກການຂາຍ

	2018	*2017*
	ກີບ	*ກີບ*
ຂາຍຊີມັ້ງຜົງ	31,106,611,294	40,162,416,516
ຂາຍຊີມັ້ງຝຸ່ນ	55,843,495,149	64,355,985,987
ຂາຍກະລິງເກົ່າ	-	1,498,760,122
	86,950,106,443	**106,017,162,625**

17. ລາຍຮັບຈາກການດຳເນີນງານອື່ນໆ

	2018	*2017*
	ກີບ	*ກີບ*
ລາຍໄດ້ຈາກການຂາຍເຫຼັກເສດ	583,172,222	-
ລາຍໄດ້ອື່ນໆ	2,239,000	96,035,087
	585,411,222	**96,035,087**

18. ຕົ້ນທຶນຈາກການຂາຍ ແລະ ຈຳໜ່າຍ

	2018	*2017*
	ກີບ	*ກີບ*
ຕົ້ນທຶນຄ່າຂົນສົ່ງ	156,998,527	470,512,196
ໂບນັດໃຫ້ພະນັກງານ	-	755,649,160
ລາຍຈ່າຍໃຫ້ພະນັກງານ	1,196,918,175	998,259,707
ລາຍຈ່າຍຄ່າຫຼຸ້ຍຫ້ຽນ	141,116,122	139,470,696
ອື່ນໆ	1,002,494,352	828,654,477
	2,497,527,176	**3,192,546,236**

19. ລາຍຈ່າຍໃນການດຳເນີນງານ

	2018 ກີບ	2017 ກີບ
ລາຍຈ່າຍໃຫ້ພະນັກງານ	3,491,440,633	2,839,590,743
ລາຍຈ່າຍທາງວິຊາການ	1,646,330,129	1,564,147,427
ຄ່າຫຼ້ຍຫ້ຽນ	230,645,080	377,241,684
ລາຍຈ່າຍຄ່າສາທາລະນຸປະໂພກ ແລະ ນ້ຳມັນ	300,021,904	293,391,877
ລາຍຈ່າຍຄ່າເຊົ່າ	209,074,500	240,450,000
ລາຍຈ່າຍຄ່າບຳລຸງຮັກສາ	149,992,299	216,920,820
ລາຍຈ່າຍຄ່າການພິມ ແລະ ເຜີຍແຜ່	412,252,542	529,655,615
ລາຍຈ່າຍຄ່າເດີນທາງ	289,994,900	365,586,004
ຄ່າບຳເນ็ด ແລະ ລາຍຈ່າຍອື່ນໆຂອງພະນັກງານ	410,222,307	253,823,610
ລາຍຈ່າຍໃນການບໍລິຫານອື່ນໆ	1,593,592,083	1,850,836,853
	8,733,566,377	**8,531,644,633**

20. ລາຍຮັບທາງການເງິນ

	2018 ກີບ	2017 ກີບ
ລາຍຮັບດອກເບ້ຍເງິນຝາກ	602,443,288	-
ກຳໄລຈາກອັດຕາແລກປ່ຽນ	387,335,395	698,624,921
	989,778,683	**698,624,921**

21. ລາຍຈ່າຍທາງການເງິນ

	2018 ກີບ	2017 ກີບ
ລາຍຈ່າຍດອກເບ້ຍ	229,244,386	1,690,821,492
ຂາດທຶນຈາກອັດຕາແລກປ່ຽນ	669,052,542	357,172,436
	898,296,928	**2,047,993,928**

22. ອາກອນກຳໄລ

ອີງຕາມໃບຍື້ງຍືນການລົງທຶນ ສະບັບປັບປຸງ ວັນທີ 17 ພະຈິກ 1998, ບໍລິສັດແມ່ນຈະຖືກຍົກເວັ້ນອາກອນກຳໄລສຳລັບສີ່ປີທຳອິດ, ພິນກຳໄລຂອງປີທຳອິດອາກອນກຳໄລຈະຫຼຸດລົງ 50% ຂອງອາກອນກຳໄລທີ່ປະກາດໃຊ້ສຳລັບສອງປີຖັດໄປ. ບໍລິສັດມີພັນທະໃນການຈ່າຍອາກອນກຳໄລໃນອັດຕາ 20% ຫຼັງຈາກໄລຍະເວລາຂໍອະນຸຍາດຫຼຸດອາກອນ. ພິນການໄລປີທຳອິດ ແມ່ນທ້າຍປີການບັນຊີ ນະວັນທີ 31 ທັນວາ 2005.

ບໍລິສັດ ໄດ້ຈົດທະບຽນກັບຕະຫຼາດຫຼັກຊັບລາວນັບແຕ່ 2 ມີນາ 2018. ອີງຕາມໜັງສືແຈ້ງການເລກທີ 2618/ກສອ ຈາກກະຊວງການເງິນ, ບໍລິສັດ ອະນຸຍາດໃຫ້ຫຼຸດອາກອນກຳໄລ 5% ຈາກອັດຕາອາກອນປົກກະຕິສຳລັບ ຫ້າ ປີທຳອິດຈາກປີ 2018 ຫາ 2021. ຫຼັງຈາກ, ບໍລິສັດມີພັນທະໃນການຈ່າຍອາກອນກຳໄລໃນອັດຕາ 20%. ດັ່ງນັ້ນ, ອາກອນກຳໄລຂອງບໍລິສັດສຳລັບ ປີ 2018 ຈະຖືກຈ່າຍໃນອັດຕາອາກອນກຳໄລ 15%.

ອາກອນທີ່ເກັບຄືນໂດຍບໍລິສັດ ຕ້ອງໄດ້ຖືກກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ການນຳໃຊ້ກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ກົດລະບຽບຕ່າງໆ ມີການປ່ຽນແປງໄປໃນການຕີຄວາມໝາຍທີ່ແຕກຕ່າງກັນ, ມູນຄ່າທີ່ລາຍງານໃນເອກະສານລາຍງານການເງິນອາດຈະປ່ຽນແປງພາຍຫຼັງເອກະສານລາຍງານການເງິນຖືກກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

ໜີ້ຕ້ອງສົ່ງອາກອນພາຍໃນປີແມ່ນອີງຕາມອາກອນກຳໄລຕ້ອງຈ່າຍໃນປີ. ໜີ້ສິນອາກອນພາຍໃນປີຂອງບໍລິສັດຖືກຄິດໄລ່ໂດຍການນຳໃຊ້ອັດຕາອາກອນທີ່ໄດ້ຖືກປະກາດໃຊ້ໃນມື້ອອກໃບລາຍງານຖານະການເງິນ.

ການຄາດຄະເນ ອາກອນກຳໄລກ່ອນຖືກສະແດງຢູ່ຂ້າງລຸ່ມນີ້:

		ສະກຸນເງິນ: ກີບ
	ປີປັດຈຸບັນ	*ປີຜ່ານມາ*
ກຳໄລກ່ອນຫັກອາກອນ	**567,544,665**	**10,499,668,955**
ດັດແກ້ເພື່ອເພີ່ມ /(ຫຼຸດລົງ) ກຳໄລກ່ອນຫັກອາກອນ:		
ເງິນແຮເຄື່ອງໃນສາງ	528,194,628	-
ເກັບຄືນເງິນແຮໜີ້ທວງຍາກ	(660,246,038)	(1,021,948,000)
ລາຍຈ່າຍອື່ນໆທີ່ບໍ່ອະນຸຍາດໃຫ້ຫັກ	478,459,482	-
ຄາດຄະເນອາກອນກຳໄລຕ້ອງມອບໃນໄລຍະ	**913,952,737**	**9,477,720,955**
ຄາດຄະເນລ່າຍຈ່າຍອາກອນກຳໄລພາຍໃນປີໃນອັດຕາ 15 %		
(2017: 20%)	**137,092,911**	**1,895,544,191**
ອາກອນກຳໄລຕ້ອງຈ່າຍໃນໄລຍະ	1,821,182,892	1,526,556,207
ດັດແກ້ການເພີ່ມຂຶ້ນຂອງອາກອນກຳໄລຂອງປີທີ່ຜ່ານມາອີງ		
ຕາມບົດລາຍງານການໄລ່ລຽງອາກອນ	-	1,900,000,000
ອາກອນກຳໄລທີ່ໄດ້ຈ່າຍໃນໄລຍະ	(1,081,894,498)	(3,500,917,506)
ອາກອນກຳໄລຕ້ອງຈ່າຍທ້າຍໄລຍະ*(ບົດອະທິບາຍ ເລກທີ 11)*	**876,381,305**	**1,821,182,892**

23. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ແມ່ນການປະຕິບັດທາງສັນຍາຕາມລາຄາທີ່ໄດ້ຕົກລົງກັນໄວ້. ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*2018 ກີບ*	*2017 ກີບ*
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກ ຢຸນນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	5,884,865,322	-
		ລາຍຈ່າຍໃນນາມຂອງພາກສ່ວນກ່ຽວຂ້ອງ	904,094,371	-
		ລາຍຈ່າຍໃນການການ		
		ຈັດຊື້ວັດຖຸດິບ	5,274,120,254	177,410,695
		ຈ່າຍເງິນປັນຜົນ	899,639,600	1,848,468,905
		ໂອນເງິນປັນຜົນເປັນທຶນຈົດທະບຽນ	-	3,512,357,968
		ລາຍຈ່າຍເງິນປັນຜົນ	1,729,440,000	668,059,200
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	10,684,497,409	8,922,949,860
		ຈ່າຍເງິນປັນຜົນ	864,360,000	1,923,916,613
		ລາຍຈ່າຍໃນນາມຂອງພາກສ່ວນກ່ຽວຂ້ອງ	6,686,395,690	8,569,293,150
		ໂອນເງິນປັນຜົນເປັນທຶນຈົດທະບຽນ	-	6,856,491,951
		ລາຍຈ່າຍເງິນປັນຜົນ	1,694,160,000	637,470,400

ຍອດເຫຼືອໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2018 ແລະ ວັນທີ 31 ທັນວາ 2017 ດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*31 ທັນວາ 2018 ກີບ*	*31 ທັນວາ 2017 ກີບ*
ຈຳນວນໜີ້ຕ້ອງຮັບພາກສ່ວນທີ່ກ່ຽວຂ້ອງ				
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກ ຢຸນນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	1,354,158,232	1,603,514,408
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	5,962,143,852	1,587,698,190
			7,316,302,084	**3,191,212,598**

23. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*31 ທັນວາ 2018*	*31 ທັນວາ 2017*
			ກີບ	*ກີບ*
***ໜີ້ຕ້ອງສິ່ງອື່ນໆ** (ບົດອະທິບາຍ ເລກທີ 13)*				
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກ ຢຸນນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ໜີ້ຕ້ອງສິ່ງເງິນປັນຜົນ	7,736,383,104	8,498,280,565
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ໜີ້ຕ້ອງສິ່ງເງິນປັນຜົນ	5,844,980,856	6,742,683,795
			13,581,363,960	**15,240,964,360**

ລາຍການເຄື່ອນໄຫວອື່ນໆຂອງພາກສ່ວນທີ່ກ່ຽວຂ້ອງ

ຄ່າຕອບແທນໃຫ້ຄະນະບໍລິຫານໃນໄລຍະມີດັ່ງລຸ່ມນີ້:

	2018	*2017*
	ກີບ	*ກີບ*
ເງິນເດືອນ ແລະ ໂບນັດ	2,380,458,404	1,408,696,913
	2,380,458,404	**1,408,696,913**

24. ເຫດການພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫຼັງຈາກວັນທີ່ສ້າງໃບລາຍງານຖານະການເງິນ ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນ.

25. ການອະນຸມັດອອກເອກະສານລາຍງານການເງິນ

ເອກະສານລາຍງານການເງິນນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018 ແມ່ນໄດ້ຖືກອະນຸມັດໂດຍຄະນະບໍລິຫານຂອງບໍລິສັດ ໃນວັນທີ 3 ເມສາ 2019.

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທ່ານ ... ສີ
ຜູ້ອຳນວຍການໃຫຍ່
3 ເມສາ 2019

ທ່ານ ຈ່າງ ຢົງຟູ
ຜູ້ຈັດຝ່າຍການບັນຊີ - ການເງິນ

EY | Assurance | Tax | Transactions | Advisory

About EY

EY is a global leader in assurance, tax, transaction and advisory services. The insights and quality services we deliver help build trust and confidence in the capital markets and in economies the world over. We develop outstanding leaders who team to deliver on our promises to all of our stakeholders. In so doing, we play a critical role in building a better working world for our people, for our clients and for our communities.

EY refers to the global organization and/or one or more of the member firms of Ernst & Young Global Limited, each of which is a separate legal entity. Ernst & Young Global Limited, a UK company limited by guarantee, does not provide services to clients. For more information about our organization, please visit ey.com.

© 2017 Ernst & Young Lao Co., Ltd
All Rights Reserved.

ey.com